ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້

ກົມກວດກາປ່າໄມ້

ເລກທີ: 0806......../ກກປມ.

ນະຄອນຫລວງວຽງຈັນ, ວັນທີ: 19 ຕຸລາ 2010

# ແຈ້ງການ

ເຖິງ: ທ່ານຫົວໜ້າ ກອງກວດກາປ່າໄມ້ປະຈຳແຂວງ, ນະຄອນຫລວງ.

ເລື່ອງ: ການກວດກາການຂົນສົ່ງສັດປ່າຜ່ານໄປປະເທດທີ່ສາມ.

- ອີງຕາມກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ, ສະບັບເລກທີ 07/ສພຊ, ລົງວັນທີ 24/12/2007.
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມ ແລະ ກອງກວດກາປ່າໄມ້ປະຈຳແຂວງ ແລະ ນະຄອນຫລວງວຽງຈັນ, ສະບັບເລກທີ 0410/ກປ ແລະ 0411/ກປ, ລົງວັນທີ 10/04/2009.
- ອີງຕາມບົດບັນທຶກການກວດກາການຂົນສົ່ງສັດນ້ຳ ແລະ ສັດປ່າ ສະບັບວັນທີ 21 ແລະ 22/9/2010.

ເພື່ອປະຕິບັດວຽກງານກວດກາ ການເຄື່ອນຍ້າຍສັດນ້ຳ ແລະ ສັດປ່າ ຜ່ານ ສປປ ລາວ ໄປຍັງປະເທດທີ່ສາມນັ້ນ ໃຫ້ກອງກວດກາປ່າໄມ້ປະຈຳແຂວງ ແລະ ນະຄອນຫລວງ ໄດ້ເອົາໃຈໃສ່ປະຕິບັດການກວດກາໃຫ້ຖືກຕ້ອງຕາມລະບຽບ ແລະ ກົດໝາຍວ່າດ້ວຍສັດນ້ຳແລະ ສັດປ່າ, ສະບັບເລກທີ 07/ສພຊ, ລົງວັນທີ 24/12/2007, ມາດຕາ 42. ຄຳແນະນຳ ຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0142/ກປ, ລົງວັນທີ 07/10/2009, ແຈ້ງການຂອງກົມກວດກາປ່າໄມ້ ສະບັບເລກທີ 1266/ກກປມ, ລົງວັນທີ 17/11/2009 ແລະ ແຈ້ງການຂອງກົມປ່າໄມ້ ສະບັບເລກທີ 1315/ກປມ, ລົງວັນທີ 19/5/2010 ຢ່າງເຂັ້ມງວດ.

ກົມກວດກາປ່າໄມ້ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ການປະກອບເອກະສານເພື່ອນຳສິນຄ້າຜ່ານ ສປປ ລາວ ໄປປະເທດທີສາມຈະຕ້ອງມີດັ່ງນີ້:

1. ໃບສະເໜີຂໍນຳຜ່ານສິນຄ້າ ເຖິງກະຊວງກະສິກຳ ແລະ ປ່າໄມ້ ໂດຍຜ່ານຂະແໜງການກ່ຽວຂ້ອງທ້ອງຖິ່ນ.
2. ໃບອະນຸຍາດສົ່ງອອກ ຈາກອົງການທີ່ກ່ຽວຂ້ອງ CITES ຂອງປະເທດຕົ້ນທາງ.
3. ໃບອະນຸຍາດນຳເຂົ້າຈາກອົງການທີ່ກ່ຽວຂ້ອງ CITES ຂອງປະເທດປາຍທາງ.
4. ໃບຢັ້ງຢືນການຂະຫຍາຍພັນ ຫລື ລ້ຽງ.
5. ໃບຢັ້ງຢືນຖິ່ນກຳເນີດ.
6. ໃບຢັ້ງຢືນປອດພະຍາດ.
7. ສັນຍາລະຫວ່າງຜູ້ນຳເຂົ້າ (ປະເທດປາຍທາງ) ແລະ ສົ່ງອອກ (ປະເທດຕົ້ນທາງ).
8. ລາຍການບັນຊີ ແລະ ຈຳນວນສັດ ທີ່ຈະນຳຜ່ານ ໃນແຕ່ລະຄັ້ງ.

ຖ້າຫາກບໍ່ມີເອກະສານຄົບຖ້ວນທີ່ກ່າວຂ້າງເທິງນັ້ນ ແມ່ນໃຫ້ນຳໃຊ້ມາດຕະການທາງກົດໝາຍສັດນ້ຳ ແລະ ສັດປ່າ ມາດຕາ 70 ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງຍັງທ່ານເພື່ອຊາບ ແລະ ປະຕິບັດຢ່າງເຂັ້ມງວດດ້ວຍ.

ຫົວໜ້າກົມກວດກາປ່າໄມ້

ກະຊວງກະສິກຳ ແລະ ປ່າໄມ້ ກົມກວດກາປ່າໄມ້

ພມີ ພມມະນີວົງ